ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງບໍລິຄຳໄຊ

ຄະນະປະຈຳ

ເລກທີ...24.../ຄປຈ.ສພຂ

ບໍລິຄຳໄຊ, ວັນທີ....4....ມີນາ 2024

# ມະຕິ

## ຂອງກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍ ການປັບປຸງບາງມາດຕາຂອງ ຂໍ້ຕົກລົງວ່າດ້ວຍນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ ຂອງແຂວງບໍລິຄຳໄຊ.

– ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1;

– ອີງຕາມ ໜັງສືສະເໜີຂອງທ່ານເຈົ້າແຂວງ ສະບັບເລກທີ 09/ຂບຊ, ລົງວັນທີ 6 ກຸມພາ 2024;

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ ແລະ ຖີ່ຖ້ວນ ຕໍ່ຮ່າງນິຕິກຳທີ່ທ່ານເຈົ້າແຂວງສະເໜີ ໃນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ຄັ້ງວັນທີ 29 ກຸມພາ 2024.

## ຄະນະປະຈຳສະພາປະຊາຊົນແຂວງ ຕົກລົງ:

ມາດຕາ 1 ເຫັນດີຮັບຮອງເອົາ ຂໍ້ຕົກລົງຂອງທ່ານເຈົ້າແຂວງວ່າດ້ວຍ ການປັບປຸງບາງມາດຕາຂອງ ຂໍ້ຕົກລົງວ່າດ້ວຍນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ ຂອງແຂວງບໍລິຄຳໄຊ.

ມາດຕາ 2 ມອບໃຫ້ທ່ານເຈົ້າແຂວງ ລົງລາຍເຊັນ ແລະ ປະກາດໃຊ້ຂໍ້ຕົກລົງສະບັບດັ່ງກ່າວ ຢ່າງເປັນທາງການ.

ມາດຕາ 3 ມອບໃຫ້ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ, ພາກສ່ວນທີ່ກ່ຽວຂ້ອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິ ສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

ມາດຕາ 4 ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈຳສະພາປະຊາຊົນແຂວງ

ປະທານ

ປອ. ສຸວັນນີ ໄຊຊະນະ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ບໍລິຄຳໄຊ

ເລກທີ 223 /ຂບຊ

ບໍລິຄຳໄຊ, ວັນທີ 28 ມິຖຸນາ 2024

# ຂໍ້ຕົກລົງ

## ວ່າດ້ວຍ ການປັບປຸງບາງມາດຕາຂອງ ຂໍ້ຕົກລົງວ່າດ້ວຍ ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້.

- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງບໍລິຄໍາໄຊ ຊຸດທີ 1 ສະບັບເລກທີ 01/ສພຂ.ບຊ, ລົງວັນທີ 21 ມັງກອນ 2021;
- ອີງຕາມ ຂໍ້ຕົງລົງ ຂອງທ່ານເຈົ້າແຂວງບໍລິຄໍາໄຊ ສະບັບເລກທີ 60/ຂບຊ, ລົງວັນທີ 25 ມັງກອນ 2021 ວ່າດ້ວຍນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້;
- ອີງຕາມ ມະຕິກອງປະຊຸມຄະນະປະຈໍາສະພາປະຊາຊົນແຂວງ ສະບັບເລກທີ 24/ຄປຈ.ສພຂ, ລົງວັນທີ 04 ມີນາ 2024.

## ເຈົ້າແຂວງ ຕົກລົງ:

### ມາດຕາ 1 ການປັບປຸງເນື້ອໃນບາງມາດຕາຂອງຂໍ້ຕົກລົງ

ຂໍ້ຕົກລົງສະບັບນີ້ ກໍານົດເນື້ອໃນການປັບປຸງບາງມາດຕາຂອງ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍ ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບ ຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ ສະບັບເລກທີ 60/ຂບຊ, ລົງວັນທີ 25 ມັງກອນ 2021 ເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສາມາດຈັດຕັ້ງປະຕິບັດຢ່າງມີປະສິດທິພາບ, ປະສິດທິຜົນ ດັ່ງນີ້:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ, ເງື່ອນໄຂ ແລະ ມາດຕະການ ກ່ຽວກັບ ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບ ຂອງໂຄງການປັບປຸງ ແລະ ສ້ອມແປງ ເສັ້ນທາງຫຼວງແຫ່ງຊາດເລກທີ 13 ໃຕ້ ລວມທັງຜົນກະທົບຈາກວຽກເພີ່ມຂອງໂຄງການ (ການກໍ່ສ້າງຂົວ 11 ແຫ່ງ) ຊ່ວງແຂວງບໍລິຄໍາໄຊ (ກມ 71+000 ຫາ ກມ 249+000), ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນ່ໃສ່ປົກປ້ອງ ສິດ, ຜົນປະໂຫຍດອັນຊອບທໍາຂອງປະຊາຊົນ, ຮັບປະກັນຄວາມສະເໝີພາບ, ໂປ່ງໃສ, ຍຸຕິທໍາ ແລະ ສາມາດກວດສອບໄດ້; ປະກອບສ່ວນເຂົ້າໃນການສ້າງສາພັດທະນາຕາມແຜນຍຸດທະສາດຂອງແຂວງບໍລິຄໍາໄຊ ໃນແຕ່ລະໄລຍະ.

**ມາດຕາ 2 ນະໂຍບາຍ ແລະ ລາຄາທົດແທນ**

ນະໂຍບາຍ ແລະ ລາຄາທົດແທນຄ່າຊັບສິນທີ່ໄດ້ຮັບຜົນກະທົບ ຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ແມ່ນການກຳນົດເງື່ອນໄຂ ແລະ ລາຄາທົດແທນຄ່າຜູ້ທີ່ໄດ້ຮັບຜົນກະທົບຈາກວຽກເພີ່ມ ໃນເຂດໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ ລວມທັງຜົນກະທົບຈາກວຽກເພີ່ມຂອງໂຄງການ (ການກໍ່ສ້າງຂົວ 11 ແຫ່ງ) ຊ່ວງແຂວງບໍລິຄຳໄຊ (ກມ 71 ຫາ ກມ 249), ເມືອງທ່າພະບາດ ຫາ ເມືອງປາກກະດິງ ແຂວງ ບໍລິຄຳໄຊ, ຊຶ່ງປະກອບມີເນື້ອທີ່ດິນ, ສິ່ງປຸກສ້າງ ແລະ ຄ່າເສຍໂອກາດ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ແມ່ນນຳໃຊ້ສະເພາະການທົດແທນຊັບສິນຂອງປະຊາຊົນຈາກ ໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ລວມທັງຜົນກະທົບຈາກວຽກເພີ່ມຂອງໂຄງການ (ການກໍ່ສ້າງຂົວ 11 ແຫ່ງ) ຊ່ວງແຂວງບໍລິຄຳໄຊ, ຊຶ່ງປະກອບມີຄອບຄົວທີ່ໄດ້ຮັບຜົນກະທົບຢູ່ໃນ 12 ບ້ານ ທີ່ຂຶ້ນກັບ 3 ເມືອງ ຄື: (1) ເມືອງທ່າພະບາດ ມີ 4 ບ້ານຄື: ບ້ານສີສົມໄຊ, ບ້ານນ້ຳໂລ້, ບ້ານໜອງເກິນ ແລະ ບ້ານປາກທວາຍ, (2) ເມືອງປາກຊັນ ມີ 4 ບ້ານ ຄື: ບ້ານກ້ວຍອຸດົມ, ບ້ານນ້ຳງຽບ, ບ້ານໂພໄຊເໜືອ ແລະ ບ້ານສີມຸງຄຸນ ແລະ (3) ເມືອງປາກກະດິງ ມີ 4 ບ້ານ ຄື: ບ້ານໂພນຈະເລີນ, ບ້ານນາເຄືອ, ບ້ານນ້ຳສ້າງ ແລະ ບ້ານນ້ຳທອນ, ສຳລັບລະບົບສາທາລະນຸປະໂພກຂອງລັດ ຈະໄດ້ມີການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຕາມລະບຽບການ.

**ມາດຕາ 8 ປະເພດຊັບສິນ**

ປະເພດຊັບສິນ ຢູ່ໃນຂົງເຂດໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ຊ່ວງແຂວງ ບໍລິຄຳໄຊ (ກມ 71 ຫາ ກມ 249) ລວມທັງຜົນກະທົບຈາກວຽກເພີ່ມຂອງໂຄງການ (ການກໍ່ສ້າງຂົວ 11 ແຫ່ງ) ຊຶ່ງນອນໃນຂອບເຂດຂອງ 3 ເມືອງ ຄື: ເມືອງທ່າພະບາດ, ເມືອງປາກຊັນ ແລະ ເມືອງປາກກະດິງ ແຂວງບໍລິຄຳໄຊ, ປະກອບມີຊັບສິນປະເພດຕ່າງໆ ຄື: ເນື້ອທີ່ດິນ, ສິ່ງປຸກສ້າງ, ລະບົບສາທາລະນຸປະໂພກ ແລະ ອື່ນໆ.

1. **ປະເພດເນື້ອທີ່ດິນ** ແມ່ນເນື້ອທີ່ດິນ ທີ່ນອນໃນເຂດຂອງໂຄງການປະກອບມີດັ່ງນີ້:
   - **ເນື້ອທີ່ດິນປຸກສ້າງ** ແມ່ນເນື້ອທີ່ດິນທີ່ນຳໃຊ້ເພື່ອປຸກສ້າງ ແລະ ຕ້ອງປະກອບມີ ສິ່ງປຸກສ້າງຕັ້ງຢູ່ໃນເນື້ອທີ່ດິນຕອນນັ້ນ ໃນເວລາເກັບຂໍ້ມູນ ຫຼື ມີເອກະສານສິດລະບຸເປັນເນື້ອທີ່ດິນປຸກສ້າງ (ແຕ່ຍັງບໍ່ທັນມີສິ່ງປຸກສ້າງ) ຕ້ອງໃຫ້ສອດຄ່ອງກັບລະບຽບຫຼັກການອອກໃບຕາດິນ;
   - **ດິນບໍລິການ:** ແມ່ນດິນນຳໃຊ້ເພື່ອດຳເນີນທຸລະກິດ ມີສິ່ງປຸກສ້າງຕັ້ງຢູ່ໃນດິນຕອນນັ້ນ ເຊັ່ນ: ຮ້ານຂາຍເຄື່ອງ, ສະຖານທີ່ບໍລິການ ຫຼື ບ່ອນໃຫ້ເຊົ່າ ທີ່ກຳລັງດຳເນີນການໃນໄລຍະເວລາເກັບຂໍ້ມູນ;
   - **ດິນນາເຟືອງ:** ແມ່ນເປັນພື້ນທີ່ດິນທີ່ບຸກເບີກຈາກແຮງງານຄົນ ຫຼື ກົນຈັກ, ຕິດັນປ້ານຄູກັນນ້ຳ ເພື່ອນຳໃຊ້ປູກເຂົ້ານາປີ, ນາແຊງ ຫຼື ປູກພືດຊະນິດອື່ນໆ ແລະ ຕ້ອງນຳໃຊ້ຢ່າງຕໍ່ເນື່ອງທຸກປີ;
   - **ດິນສວນ:** ແມ່ນດິນທີ່ບຸກເບີກນຳໃຊ້ ແລະ ບົວລະບັດຮັກສາຢ່າງຕໍ່ເນື່ອງ ມີພືນລະປຸກ, ຕົ້ນໄມ້ ແລະ ອື່ນໆ ເຫັນໄດ້ປະຈັກຕາ ໃນໄລຍະເກັບກຳຂໍ້ມູນ;
2. **ຊັບສິນປະເພດສິ່ງປຸກສ້າງ** ປະກອບມີ: ເຮືອນ, ຮ້ານຂາຍເຄື່ອງ, ຮ້ານບໍລິການອື່ນໆ ແລະ ສິ່ງປຸກສ້າງສຳຮອງປະກອບມີ: ເຮືອນຄົວ, ເທີບເຮືອນ, ເທີບຮ້ານ, ຫ້ອງນ້ຳ, ຮ້ານສ້ອມແປງລົດ, ຮົ້ວ, ກຳແພງ, ຕູບ, ລານເບຕົງ, ນ້ຳສ້າງ, ນ້ຳບາດານ ແລະ ທໍ່ລະບາຍນ້ຳ;
3. **ລະບົບສາທາລະນຸປະໂພກ** ປະກອບມີ: ໄຟຟ້າ, ນ້ຳປະປາ, ສາຍສິ່ງແຫ່ງຊາດ (ສາຍໄຍແກ້ວ), ເສົາໄຟເບືອງທາງ ອື່ນໆ.

**ມາດຕາ 10 ນະໂຍບາຍການທົດແທນຄ່າເສຍຫາຍ**

ຜູ້ທີ່ໄດ້ຮັບຜົນກະທົບ ຈະໄດ້ຮັບນະໂຍບາຍການທົດແທນດັ່ງນີ້:

1. ຜູ້ທີ່ໄດ້ຮັບຜົນກະທົບ ກ່ຽວກັບສິດນຳໃຊ້ເນື້ອທີ່ດິນຖືກຕ້ອງຕາມກົດໝາຍ ທີ່ສູນເສຍເນື້ອທີ່ດິນທັງໝົດ ຫຼື 80% ຂຶ້ນໄປ, ສ່ວນເນື້ອທີ່ດິນທີ່ຍັງເຫຼືອບໍ່ສາມາດນຳໃຊ້ໄດ້ອີກ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດ (ສ່ວນຕອນດິນທີ່ຍັງເຫຼືອ ແລະ ໄດ້ຮັບການທົດແທນຄືນນັ້ນຈະຕົກເປັນດິນຂອງລັດ);
2. ຜູ້ໄດ້ຮັບຜົນກະທົບ ກ່ຽວກັບສິດນຳໃຊ້ເນື້ອທີ່ດິນຖືກຕ້ອງຕາມກົດໝາຍ ຫາກໄດ້ສູນເສຍເນື້ອທີ່ດິນພຽງສ່ວນໃດໜຶ່ງ, ສ່ວນເນື້ອທີ່ດິນທີ່ຍັງເຫຼືອສາມາດນຳໃຊ້ໄດ້ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍໃນສ່ວນທີ່ໄດ້ສູນເສຍນັ້ນ ດ້ວຍມູນຄ່າເປັນເງິນທີ່ຄິດໄລ່ໄວ້; ສ່ວນເນື້ອທີ່ດິນ ທີ່ຍັງເຫຼືອທີ່ສາມາດນຳໃຊ້ໄດ້ ຜູ້ທີ່ໄດ້ຮັບຜົນກະທົບ ຕ້ອງໄດ້ຮັບເອກະສານກ່ຽວກັບສິດນຳໃຊ້ເນື້ອທີ່ດິນຕອນນັ້ນຄືນໃໝ່ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ໂດຍເຈົ້າຂອງໂຄງການ ຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆທັງໝົດ ທີ່ເກີດຂຶ້ນຈາກການປ່ຽນແປງສິດນຳໃຊ້ເນື້ອທີ່ດິນ;
3. ຜູ້ທີ່ສູນເສຍສິ່ງປຸກສ້າງທັງໝົດ ຫຼື ບາງສ່ວນ ເຈົ້າຂອງໂຄງການ ຕ້ອງໄດ້ທົດແທນຄ່າເສຍຫາຍ ດ້ວຍມູນຄ່າປ່ຽນແທນຂອງສິ່ງປຸກສ້າງດັ່ງກ່າວ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບທີ່ເປັນເຈົ້າຂອງກຳມະສິດຂອງສິ່ງປຸກສ້າງນັ້ນ ໂດຍບໍ່ມີການຫັກຄ່າຫຼຸ້ຍຫ້ຽນ ຫຼື ບໍ່ມີການຫຼຸດຄ່າທົດແທນສຳລັບວັດຖຸທີ່ຍັງເຫຼືອ;
4. ການປະຕິບັດການທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບໃນທຸກໆກໍລະນີ ເຈົ້າຂອງໂຄງການຕ້ອງໄດ້ປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງ ເພື່ອຕິດຕາມກວດກາ, ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມແຜນທົດແທນຄ່າເສຍຫາຍ;
5. ຊັບສິນທີ່ມີຂໍ້ຂັດແຍ່ງກັບບຸກຄົນອື່ນ ຫຼື ອົງການຈັດຕັ້ງໃດໜຶ່ງ ຕ້ອງໄດ້ສ້າງບົດບັນທຶກຕົວເລກຜົນກະທົບຄ່າເສຍຫາຍໄວ້, ພາຍຫຼັງທີ່ສຳເລັດການແກ້ໄຂຂໍ້ຂັດແຍ່ງແລ້ວ ຈຶ່ງໃຫ້ສະເໜີຂໍການທົດແທນ;
6. ການຄິດໄລ່ລາຄາຫົວໜ່ວຍທົດແທນ ໄດ້ກຳນົດໄວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;
7. ການຊ່ວຍເຫຼືອພິເສດ ແມ່ນການຊ່ວຍຄອບຄົວທີ່ມີເງື່ອນໄຂຄົບຖ້ວນ ຈຶ່ງຈະໄດ້ຮັບການຊ່ວຍເຫຼືອພິເສດໃນຮູບແບບເປັນເງິນຕາມເງື່ອນໄຂ ຄື:
   (1) ເປັນຄອບຄົວທີ່ຖືກຍົກຍ້າຍເຮືອນ ແລະ ຮ້ານບໍລິການຕ່າງໆ, ຊຶ່ງຈະມີການຊ່ວຍເຫຼືອໃນອັດຕາ 420,000 ກີບ/ເດືອນ/ຄົນ ຕາມໄລຍະເວລາຈົນສາມາດປຸກສ້າງເຮືອນໃໝ່ສຳເລັດ ຊຶ່ງບໍ່ເກີນ 3 ເດືອນ;
   (2) ເປັນຄອບຄົວຜູ້ດ້ອຍໂອກາດ, ຊຶ່ງຈະມີການຊ່ວຍເຫຼືອໃນອັດຕາ 420,000 ກີບ/ເດືອນ/ຄົນ ຕາມໄລຍະເວລາຕົວຈິງຂອງການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ ໃນເຂດທີ່ໄດ້ຮັບຜົນກະທົບຂອງຄອບຄົວຜູ້ດ້ອຍໂອກາດ ດັ່ງກ່າວ ແຕ່ບໍ່ເກີນ 3 ເດືອນ;
8. ຮ້ານຄ້າ ແລະ ຮ້ານບໍລິການ ຈະໄດ້ຮັບການທົດແທນຄ່າເສຍໂອກາດລາຍໄດ້ ໃນຊ່ວງໄລຍະດຳເນີນການກໍ່ສ້າງໂຄງການທີ່ບໍ່ສາມາດເປີດໃຫ້ບໍລິການໄດ້ ຊຶ່ງຈະມີການຄິດໄລ່ຕາມໄລຍະເວລາການປິດຮ້ານຕົວຈິງ (ຕາມການປຶກສາຫາລື ແລະ ເຮັດບົດບັນທຶກກັບຜູ້ໄດ້ຮັບຜົນກະທົບຕົວຈິງ), ໂດຍຈະເອົາມູນຄ່າກຳໄລທີ່ຄິດໄລ່ລຽງຈາກການມອບຈ່າຍອາກອນ (ປະມານ 1-3% ຕາມປະເພດຂອງທຸລະກິດ ແລະ ບໍລິການ) ທີ່ເປັນລາຍເດືອນ ອອກມາເປັນຄ່າສະເລ່ຍເປັນວັນມາຄູນໃຫ້ ໄລຍະທີ່ເສຍໂອກາດ (ມື້) ການສ້າງລາຍໄດ້ມາເປັນພື້ນຖານ ໃນການຄິດໄລ່ການທົດແທນຄ່າເສຍໂອກາດລາຍໄດ້ ໃນຊ່ວງໄລຍະທີ່ບໍ່ສາມາດດຳເນີນທຸລະກິດໄດ້;
9. ທໍ່ລະບາຍນ້ຳທາງເຂົ້າເຮືອນ, ເສົາໄຟຟ້າ, ທໍ່ນ້ຳປະປາ ແລະ ເສົາໄຟເບື້ອງທາງ ທີ່ໄດ້ຮັບຜົນກະທົບຈາກໂຄງການແມ່ນຈະບໍ່ມີການທົດແທນຄືນ ເນື່ອງຈາກວ່າ ທາງໂຄງການ ຈະເອົາເຂົ້າໃນມູນຄ່າຂອງສັນຍາກໍ່ສ້າງ;

10. ຖ້າວ່າທາງຊອຍ (ທາງເຂົ້າບ້ານ) ແລະ ທາງເຂົ້າວັດ ມີລະດັບທີ່ຕໍ່າກວ່າທາງທີ່ກໍ່ສ້າງໃໝ່ ແລະ ບໍ່ສາມາດເຂົ້າອອກໄດ້ສະດວກຄືເກົ່າ ທາງໂຄງການຈະຕ້ອງໄດ້ປັບຄວາມສູງຂອງທາງເຂົ້າຊອຍນັ້ນ ໃຫ້ພຽງທາງໃໝ່ ເພື່ອໃຫ້ສາມາດທ່ຽວໄດ້ເປັນປົກກະຕິຄືເກົ່າ;
11. ຕົ້ນໄມ້, ດອກໄມ້ ຫຼື ຕົ້ນໄມ້ປະດັບ ທີ່ນອນໃນເຂດສະຫງວນຂອງທາງຫຼວງແຫ່ງຊາດ ແມ່ນຈະບໍ່ໄດ້ຮັບການທົດແທນ;
12. ປ້າຍໂຄສະນາຕ່າງໆທີ່ໄດ້ຮັບ ຫຼື ບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກພາກລັດ ກໍ່ຄືຈາກຫ້ອງການ ອົງການພັດທະນາບໍລິຫານຕົວເມືອງ, ພະແນກຖະແຫຼງຂ່າວ ແລະ ວັດທະນະທຳແຂວງບໍລິຄຳໄຊ ແລະ ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ ແມ່ນຈະຕ້ອງໄດ້ຮັບການຍົກຍ້າຍອອກໄປດ້ວຍເຈົ້າຂອງປ້າຍເອງ ໂດຍບໍ່ມີການທົດແທນໃດໆຈາກໂຄງການ.

**ມາດຕາ 15 ຫຼັກການກຳນົດລາຄາຫົວໜ່ວຍທົດແທນ**

1. **ປະເພດເນື້ອທີ່ດິນ** ແມ່ນໄດ້ມີການສົມທຽບຂໍ້ມູນຈາກຫຼາຍແຫຼ່ງ ເພື່ອກຳນົດອອກມານຳໃຊ້ເປັນລາຄາຫົວໜ່ວຍ ທົດແທນໃຫ້ແທດເໝາະກັບສະພາບທ້ອງຖິ່ນ ໂດຍກຳນົດເອົາຄ່າສະເລຍ ຂອງລາຄາການຊື້-ຂາຍ ເນື້ອທີ່ດິນຕາມທ້ອງຕະຫຼາດໃນແຕ່ລະທ້ອງຖິ່ນ ບວກ ກັບລາຄາເນື້ອທີ່ດິນ ຕາມຂໍ້ຕົກລົງ ເລກທີ 193/ຂບຊ, ລົງວັນທີ 6 ເມສາ 2023 ວ່າດ້ວຍການປະເມີນຫົວໜ່ວຍທີ່ດິນພາຍໃນແຂວງບໍລິຄຳໄຊ ແລ້ວເອົາມາຫານ 2, ໂດຍແຍກຕາມປະເພດເນື້ອທີ່ດິນ ໃນລາຄາເປັນເງິນກີບ ຕໍ່ຕາແມັດ;
2. **ຊັບສິນປະເພດສິ່ງປຸກສ້າງ** ແມ່ນພື້ນຖານການກຳນົດລາຄາຫົວໜ່ວຍທົດແທນສິ່ງປຸກສ້າງ ແມ່ນການປະເມີນມູນຄ່າຂອງລາຄາວັດສະດຸກໍ່ສ້າງຕາມທ້ອງຕະຫລາດໃນໄລຍະການລົງເກັບກຳຂໍ້ມູນໃນເດືອນ ຕຸລາ 2023 ມາບວກກັບລາຄາຫົວໜ່ວຍ ທີ່ທາງກະຊວງ ຍທຂ ວາງອອກ ສະບັບເລກທີ 26123/ຍທຂ, ລົງວັນທີ 17 ທັນວາ 2021 ແລະ ບວກກັບລາຄາທົດແທນຊ່ອງ (ກມ 71 ກມ 346 ທີ່ໄດ້ບວກອັດຕາເງິນເຟີທີ່ກຳນົດໂດຍທະນາຄານກາງ ຊ່ວງທີ່ລົງເກັບກຳຂໍ້ມູນ ໃນເດືອນ ຕຸລາ 2023 ຄືຢູ່ທີ່ 25,83%) ແລ້ວມາຫານ 3.

**ມາດຕາ 16 ລາຄາຫົວໜ່ວຍທົດແທນ**

ລາຄາຫົວໜ່ວຍທົດແທນແມ່ນກຳນົດມູນຄ່າຕໍ່ກັບຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການ ໂດຍແຍກເປັນ 3 ລາຄາຫົວໜ່ວຍຂອງປະເພດສິ່ງປຸກສ້າງ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

**ຕາຕະລາງ 1.** ລາຍລະອຽດຊັບສິນປະເພດສິ່ງປຸກສ້າງ, ເນື້ອທີ່ດິນ ແລະ ການກຳນົດລາຄາຫົວໜ່ວຍທົດແທນຄ່າເສຍຫາຍໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກວຽກເພີ່ມການກໍ່ສ້າງຂົວ 11 ແຫ່ງ ໃນແຂວງບໍລິຄຳໄຊ ຂອງໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້, ເມືອງທ່າພະບາດ, ເມືອງປາກຊັນ ແລະ ເມືອງປາກກະດິງ ແຂວງບໍລິຄຳໄຊ.

- *ປະເພດສິ່ງປຸກສ້າງ*

| ລ/ດ | ລາຍການ | ຫົວໜ່ວຍ | ລາຄາ (ກີບ) | | |
|---|---|---|---|---|---|
| | ປະເພດສິ່ງປຸກສ້າງ | | ຕໍ່າ | ກາງ | ສູງ |
| I | **ປະເພດສິ່ງປຸກສ້າງບ້ານຈອມຕູບ, ຮ້ານຂະໜາດນ້ອຍ ແລະ ເທີຍຮ້ານ ເຮັດດ້ວຍ** | | | | |
| | ໂຄງສ້າງໄມ້ກົມ, ພື້ນແປ້ນ,ຝາແປ້ນ ຫຼື ໄມ້ກົມ, ສັງກະສີ | ມ$^2$ | 140,498 | 163,081 | 185,664 |
| | ໂຄງສ້າງໄມ້ແປຮູບ, ພື້ນແປ້ນ,ຝາແປ້ນ, ມຸງສັງກະສີ | ມ$^2$ | 191,790 | 219,373 | 246,956 |
| | ໂຄງສ້າງໄມ້ແປຮູບ, ພື້ນເທເບຕົງ, ມຸງສັງກະສີ | ມ$^2$ | 492,389 | 522,472 | 555,701 |

| | | | | | |
|---|---|---|---|---|---|
| | ໂຄງສ້າງໄມ້ແປຮູບ, ພື້ນເທເບຕົງ, ມຸງກະເບື້ອງ ຫຼື ອາລູຊີງ | ມ$^2$ | 553,118 | 597,638 | 662,158 |
| **II** | **ປະເພດເຮືອນກໍ່ຊັ້ນດຽວ, ເຮືອນຢົກພື້ນ ແລະ ເຮືອນຮ້ານ: ເຮັດດ້ວຍ** | | | | |
| 1 | ໂຄງສ້າງໄມ້,ຝາແປ້ນ, ມຸງສັງກະສີ | ມ$^2$ | 2,295,000 | 2,520,000 | 2,640,000 |
| 2 | ໂຄງສ້າງໄມ້,ຝາແປ້ນ, ມຸງກະເບື້ອງ | ມ$^2$ | 2,340,000 | 2,570,000 | 2,690,000 |
| 3 | ໂຄງສ້າງໄມ້,ຝາກໍ່ດິນຈີ່, ມຸງສັງກະສີ | ມ$^2$ | 2,622,500 | 2,884,500 | 3,022,000 |
| 4 | ໂຄງສ້າງໄມ້, ຝາກໍ່ດິນຈີ່, ມຸງກະເບື້ອງ | ມ$^2$ | 2,667,000 | 2,933,500 | 3,073,000 |
| 5 | ໂຄງສ້າງເບຕົງ, ຝາກໍ່ດິນບ່ອກ, ມຸງສັງກະສີ | ມ$^2$ | 2,572,500 | 2,830,000 | 2,965,000 |
| 6 | ໂຄງສ້າງເບຕົງ, ຝາກໍ່ດິນບ່ອກ, ມຸງກະເບື້ອງ | ມ$^2$ | 2,615,000 | 2,877,000 | 3,014,000 |
| 7 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງສັງກະສີ | ມ$^2$ | 3,024,000 | 3,326,500 | 3,485,000 |
| 8 | ໂຄງສ້າງເບຕົງ, ຝາກໍ່ດິນຈີ່, ມຸງກະເບື້ອງ | ມ$^2$ | 3,130,667 | 3,595,333 | 4,117,000 |
| **III** | **ປະເພດເຮືອນ 2 ຊັ້ນກໍ່ແລະ ເຮືອນເຄິ່ງກໍ່ເຄິ່ງໄມ້: ເຮັດດ້ວຍ** | | | | |
| 1 | ເຮືອນລຸ່ມກໍ່,ເທິງໄມ້, ມຸງສັງກະສີ | ມ$^2$ | 1,966,939 | 2,170,428 | 2,428,215 |
| 2 | ເຮືອນລຸ່ມກໍ່,ເທິງໄມ້, ມຸງກະເບື້ອງ | ມ$^2$ | 2,329,257 | 2,735,365 | 3,146,612 |
| 3 | ເຮືອນກໍ່ດິນຈີ່ສອງຊັ້ນ, ມຸງສັງກະສີ | ມ$^2$ | 2,045,215 | 2,344,209 | 2,545,393 |
| 4 | ເຮືອນກໍ່ດິນຈີ່ສອງຊັ້ນ, ມຸງກະເບື້ອງ | ມ$^2$ | 2,424,940 | 2,929,499 | 3,216,786 |
| **IV** | **ສິ່ງປຸກສ້າງປະເພດ ຮ້ານຂາຍເຄື່ອງ: ເຮັດດ້ວຍ** | | | | |
| 1 | ໂຄງສ້າງໄມ້, ຝາແປ້ນ, ພື້ນແປ້ນ,ມຸງສັງກະສີ | ມ$^2$ | 762,656 | 840,405 | 943,320 |
| 2 | ໂຄງສ້າງໄມ້, ຝາແປ້ນ, ພື້ນແປ້ນ, ມຸງກະເບື້ອງ | ມ$^2$ | 983,948 | 1,134,280 | 1,290,903 |
| 3 | ໂຄງສ້າງເບຕົງ, ຝາກໍ່, ພື້ນເບຕົງ, ມຸງສັງກະສີ | ມ$^2$ | 1,303,154 | 1,457,593 | 1,742,065 |
| 4 | ໂຄງສ້າງເບຕົງ, ຝາກໍ່, ພື້ນເບຕົງ, ມຸງກະເບື້ອງ ຫຼື ອາລູຊີງ | ມ$^2$ | 1,804,980 | 1,974,353 | 2,250,183 |
| **V** | **ເຮືອນຄົວ, ບ່ອນຈອດລົດ, ເທີບຮ້ານ, ໂຮງສີເຂົ້າ ແລະ ຄອກສັດ: ເຮັດດ້ວຍ** | | | | |
| 1 | ເຮັດດ້ວຍໂຄງໄມ້ກົມ ຫຼື ໄມ້ແປຮູບ, ເທພື້ນເບຕົງ , ມຸງສັງກະສີ ຫຼື ອາລູຊີງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | ມ$^2$ | 510,000 | 690,000 | |
| 2 | ເຮັດດ້ວຍໂຄງໄມ້ກົມ ຫຼື ໄມ້ແປຮູບ, ເທພື້ນເບຕົງ , ມຸງກະເບື້ອງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | ມ$^2$ | 535,000 | 720,000 | 920,000 |
| 3 | ເຮັດດ້ວຍໂຄງເຫຼັກ, ເທພື້ນເບຕົງ, ມຸງສັງກະສີ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | ມ$^2$ | 570,000 | 790,000 | 1,020,000 |
| 4 | ເຮັດດ້ວຍໂຄງເຫຼັກ, ເທພື້ນເບຕົງ, ມຸງກະເບື້ອງ ຫຼ ອາລູຊີງ(ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | ມ$^2$ | 630,000 | 840,000 | 1,150,000 |
| 5 | ເຮັດດ້ວຍໂຄງເບຕົງ, ເທພື້ນເບຕົງ, ມຸງສັງກະສີ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | ມ$^2$ | 655,000 | 880,000 | 1,300,000 |

| | | | | | |
|---|---|---|---|---|---|
| 6 | ເຮັດດ້ວຍໂຄງເບຕົງ, ເທພື້ນເບຕົງ, ມຸງກະເບື້ອງ ຫຼື ອາລູຊິງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ) | ມ² | 690,000 | 900,000 | 1,500,000 |
| **VI** | **ປະເພດຫ້ອງນໍ້າ ເຮັດດ້ວຍ** | | | | |
| 1 | ກໍ່ດິນຈີ່, ມຸງສັງກະສີ | ມ² | 550,000 | 720,000 | 900,000 |
| 2 | ຝາກໍ່ດິນຈີ່, ຕິດກະໂລ, ມຸງກະເບື້ອງ | ມ² | 1,100,000 | 1,380,000 | 1,500,000 |
| **VII** | **ປະເພດຮົ້ວ** | | | | |
| 1 | ກຳແພງກໍ່ດ້ວຍດິນບ໋ອກ | ມຍ | 325,000 | 405,000 | 485,000 |
| 2 | ກຳແພງກໍ່ດ້ວຍດິນຈີ່ | ມຍ | 384,000 | 464,000 | 544,000 |
| 3 | ຮົ້ວເສົາເບຕົງ ກັບ ຕາໜ່າງໜາກກອກ | ມຍ | 120,000 | 132,500 | 145,000 |
| 4 | ຮົ້ວເສົາເບຕົງ ກັບ ໜາມໜາກຈັບ | ມຍ | 97,000 | 109,500 | 122,000 |
| 5 | ຮົ້ວເສົາໄມ້ ກັບ ຕາໜ່າງໜາກກອກ | ມຍ | 80,000 | 90,000 | 100,000 |
| 6 | ຮົ້ວເສົາໄມ້ ກັບ ໜາມໜາກຈັບ | ມຍ | 65,000 | 75,000 | 90,000 |
| 7 | ປະຕູຮົ້ວ (ຄ່າຍົກຍ້າຍ) | ຈຸດ | 1,000,000 | 1,200,000 | 1,500,000 |
| 8 | ເສົາປູນ | ເສົາ | 70,000 | 80,000 | 100,000 |
| 9 | ຫຼັກຮົ້ວໄມ້ແກນຫຼ້ອນ | ເສົາ | 30,000 | 35,000 | 40,000 |
| 10 | ໜາມໜາກຈັບ | ໂຄ້ງ | 170,000 | 200,000 | 220,000 |
| 11 | ຕາໜ່າງໜາກກອກ 1*1.8ມ | ມຍ | 20,000 | 21,500 | 23,000 |
| 12 | ທໍ່ລະບາຍນໍ້າ 60 | ທໍ່ | | 350,000 | |
| 13 | ທໍ່ລະບາຍນໍ້າ 80 | ທໍ່ | | 550,000 | |
| 14 | ແທ້ງສ້າງ 80 | ແທ້ງ | 100,000 | | |
| 15 | ແທ້ງສ້າງ 100 | ແທ້ງ | 120,000 | | |
| **VIII** | **ລານເບຕົງ** | | | | |
| 1 | ລານເບຕົງເສີມເຫຼັກເບົາ 5 ຫາ 10 ຊມ | ມ² | | 180,000 | |
| 2 | ລານເບຕົງເສີມເຫຼັກ 20 ຊມ | ມ² | | 245,000 | |
| 3 | ລານເບຕົງທຳມະດາ | ມ² | | 120,000 | |
| **IX** | **ປະເພດນໍ້າໃຊ້ ແລະ ນໍ້າປະປາ** | | | | |
| 1 | ນໍ້າສ້າງ | ຕໍ່ແມັດເລິກ | 170,000 | 206,956 | 300,000 |
| 2 | ນໍ້າບາດານ | ຈຸດ | 5,000,000 | 10,000,000 | 15,000,000 |
| 3 | ກົງເຕີນໍ້າ | ຈຸດ | 400,000 | 600,000 | 700,000 |

- *ປະເພດທີ່ດິນ*

| ລ/ດ | ການແບ່ງເຂດ | ເຂດບ້ານປະເມີນຂອງແຂວງ | ປະເພດທີ່ດິນແລະລາຄາ | |
|---|---|---|---|---|
| | | | ດິນປຸກສ້າງ | ດິນກະສິກຳ |

| | | | | |
|---|---|---|---|---|
| ເມືອງທ່າພະບາດ | | | | |
| 1 | ເຂດຕົວເມືອງ | | | |
| 2 | ເຂດຊານເມືອງ | ບ. ສີສົມໄຊ, ບ. ນໍ້າໂລ້, ບ. ໜອງເກີນ, ບ. ປາກທວາຍ | 275,500 | 148,667 |
| 3 | ເຂດຊົນນະບົດ | | | |
| ເມືອງປາກຊັນ | | | | |
| 1 | ເຂດຕົວເມືອງ | ບ. ໂພນໄຊເໜືອ, ບ. ສີມຸງຄຸນ. | 910,000 | |
| 2 | ເຂດຊານເມືອງ | ບ. ກ້ວຍອຸດົມ,ບ. ນໍ້າງຽບ, | 244,250 | 122,500 |
| 3 | ເຂດຊົນນະບົດ | | | |
| ເມືອງປາກກະດິງ | | | | |
| 1 | ເຂດຕົວເມືອງ | ບ.ໂພນຈະເລີນ, ບ. ນໍ້າສາງ, ບ. ນໍ້າທອນ | 270,500 | 180,000 |
| 2 | ເຂດຊານເມືອງ | ບ. ນາເຄືອນອກ | 260,000 | |
| 3 | ເຂດຊົນນະບົດ | | | |

**ມາດຕາ 2 ການປ່ຽນແທນເນື້ອໃນຂອງມາດຕາ**

ຂໍ້ຕົກລົງສະບັບນີ້ ປັບປຸງເນື້ອໃນມາດຕາ 1, 2, 6, 8, 10, 15 ແລະ ປ່ຽນແທນມາດຕາ 16 ຂອງ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍນະໂຍບາຍ ແລະ ລາຄາທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ ແຂວງບໍລິຄໍາໄຊ ສະບັບເລກທີ 60/ຂບຊ, ລົງວັນທີ 25 ມັງກອນ 2021.

**ມາດຕາ 3 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ທ່ານເຈົ້າແຂວງ ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ເຈົ້າແຂວງ**

ປອ. ທອງແກ້ວ ໄຊສົງຄາມ